**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 12

## General knowledges on international cooperation in the enforcement and court judgement

ຄວາມຮູ້ທົ່ວໄປກ່ຽວກັບການຮ່ວມມືສາກົນໃນການປະຕິບັດຄຳຕັດສິນຂອງສານ

### 1. ສະພາບລວມກ່ຽວກັບການຮ່ວມມືສາກົນຂອງ ສປປ ລາວ ໃນຂົງເຂດກົດໝາຍ

ຕາມທັດສະນະ ຂອງສັງຄົມນິຍົມ, ການພົວພັນກັບຕ່າງປະເທດ ໝາຍເຖິງການພົວພັນມີລັກສະນະຮອບດ້ານແບບໝັ້ນຄົງ, ຍາວນານ, ສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດລະຫວ່າງລັດຕໍ່ລັດ ເພື່ອນຳເອົາຜົນປະໂຫຍດມາສູ່ທັງສອງຝ່າຍ ເປັນການພົວພັນແບບຍຸດທະສາດ ຫຼື ເອີ້ນວ່າ ການພົວພັນກັບປະເທດເພື່ອນມິດຍຸດທະສາດສັງຄົມນິຍົມ,  ຊຶ່ງປັດຈຸບັນ ມີ ສປປ ລາວ, ສສ ຫວຽດນາມ, ສປ ຈີນ, ສປປ ເກົາຫຼີ ແລະ ສ ກູບາ ທີ່ ຍັງຢຶດໝັ້ນໃນອຸດົມການສັງຄົມນິຍົມ; ສຳລັບຄຳສັບ ການພົວພັນກັບເພື່ອນມິດຍຸດທະສາດໝາຍເຖິງການພົວພັນຮ່ວມມື ລະຫວ່າງປະເທດຕາມແນວທາງນະໂຍບາຍການຕ່າງປະເທດ ຂອງພັກປະຊາຊົນປະຕິວັດລາວ ກັບບັນດາປະເທດສັງຄົມນິຍົມອ້າຍນ້ອງດ້ວຍກັນ ເປັນຕົ້ນແມ່ນ ສສ ຫວຽດນາມ ແລະ ສປ ຈີນ; ການພົວພັນກັບປະເທດເພື່ອນມິດຍຸດທະສາດ ຂອງວຽກງານຍຸຕິທຳ  ແມ່ນມີສົນທິສັນຍາວ່າດ້ວຍການຮ່ວມມືທາງດ້ານຍຸຕິທຳກ່ຽວກັບບັນຫາທາງແພ່ງ ແລະ ທາງອາຍາ ລະຫວ່າງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແລະ ສາທາລະນະລັດສັງຄົມນິຍົມຫວຽດນາມ.

ການພົວພັນຮ່ວມມືກັບຕ່າງປະເທດແມ່ນການພົວພັນຮ່ວມມື ລະຫວ່າງ ລັດເອກະລາດ ກັບລັດເອກະລາດ ບົນພື້ນຖານແຫ່ງການເຄົາລົບນັບຖືເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ ແລະ ກັນ, ມີຄວາມສະເໝີພາບ ແລະ ຖືກຮັບຮູ້ຈາກສາກົນ; ການຕ່າງປະເທດແມ່ນການປົກປ້ອງຜົນປະໂຫຍດ, ປົກປ້ອງຄົນ ແລະຊັບສົມບັດຂອງປະເທດ ການພົວພັນກັບຕ່າງປະເທດ ກໍມີຫຼາຍລະດັບ, ມີຫຼາຍຮູບການ; ເນື້ອໃນຕົ້ນຕໍຂອງການພົວພັນກັບຕ່າງປະເທດ ແມ່ນການພົວພັນດ້ານການທູດ, ດ້ານການເມືອງ ແລະ ຄວາມໝັ້ນຄົງ, ດ້ານເສດຖະກິດ, ວັດທະນະທຳ ແລະ ການການຕ່າງປະເທດຂອງປະຊາຊົນ, ຊຶ່ງໃນນັ້ນເປົ້າໝາຍຕົ້ນຕໍສຸດທ້າຍ ແມ່ນເລັ່ງໃສ່ດຶງດູດເອົາທຶນຮອນ, ເຕັກນິກ-ວິທະຍາສາດ ມາພັດທະນາ ປະເທດຊາດ ຂອງຕົນ ໃຫ້ບັນລຸຕາມອຸດົມການ ທີ່ຕັ້ງໄວ້. ວຽກງານພົວພັນຮ່ວມມືກັບຕ່າງປະເທດ ຕ້ອງປະຕິບັດຕາມລະບຽບກົດໝາຍຂອງແຕ່ລະປະເທດ, ກົດບັດສາກົນ, ມີຫຼັກການ,  ມີຮູບການ ແລະ ເນື້ອໃນ ທີ່ສອດ ຄ່ອງກັບສະພາບຈຸດພິເສດ ຂອງພາກພື້ນ ກໍ່ຄືກົດໝາຍສາກົນ, ມີລະບົບເອກະສານພົວພັນ, ມີ

ລະບົບພິທີການທູດ ທີ່ທຸກໆປະເທດຍອມຮັບ ແລະ ຕ້ອງປະຕິບັດຕາມຢ່າງຖືກຕ້ອງ ຕາມທັດສະນະຂອງສັງຄົມນິຍົມ, ການພົວພັນກັບຕ່າງປະເທດໝາຍເຖິງການພົວພັນ ມີລັກສະນະຮອບດ້ານແບບໝັ້ນຄົງຍາວນານ ລະຫວ່າງລັດຕໍ່ລັດ ເພື່ອນຳເອົາຜົນປະໂຫຍດມາສູ່ທັງສອງຝ່າຍ, ເອີ້ນວ່າ ການພົວພັນແບບຍຸດທະສາດ; ການພົວພັນຮ່ວມມືກັບ ປະເທດເພື່ອນມິດຍຸດທະສາດ ແມ່ນການພົວພັນຮ່ວມມື ຕາມແນວທາງນະໂຍບາຍການຕ່າງປະເທດ ຂອງພັກ ກັບບັນດາປະເທດສັງຄົມນິຍົມ ດ້ວຍກັນ, ຊຶ່ງປັດຈຸບັນ ມີ ສປປ ລາວ, ສສ ຫວຽດນາມ, ສປ ຈີນ, ສປປ ເກົາຫລີ ແລະ ສ ກູບາ ແນວທາງການຕ່າງປະເທດ ຂອງພັກ ແລະ ລັດ ແມ່ນ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການ ຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ ບົນຫຼັກການ ເຄົາລົບເອກະລາດ, ອະທິປະໄຕ ຂອງກັນ ແລະ ກັນ ບໍ່ແຊກແຊງ ເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ຕ່າງຝ່າຍຕ່າງມີຜົນປະໂຫຍດ, ປະຕິບັດນະໂຍບາຍພົວພັນ ແບບຫຼາຍທິດ, ຫຼາຍຝ່າຍ ຫຼາຍຮູບແບບ ແລະ ຫຼາຍລະດັບ, ເປີດກ້ວາງການພົວພັນຮ່ວມມື ເປັນແຕ່ລະບາດກ້າວຢ່າງເໝາະສົມ, ແທດເໝາະກັບເງື່ອນໄຂຄວາມສາມາດຕົວຈິງ, ເອົາການພົວພັນການທູດຕິດພັນກັບການພົວພັນຮ່ວມມືທາງດ້ານເສດ ຖະກິດກັບສາກົນ ບົນຈິດໃຈດັ່ງ ກ່າວນັ້ນ ພັກໄດ້ກຳນົດ ນະໂຍບາຍລະອຽດ ຕໍ່ແຕ່ລະເປົ້າໝາຍ ໂດຍສອດຄ່ອງ ກັບສະພາບຈຸດພິເສດ ຂອງການປະຕິວັດ ໃນແຕ່ລະໄລຍະ.

ຕາມມາດຕາ 8 ການຮ່ວມມືສາກົນ[1] ລັດສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ເຕັກໂນໂລຊີ, ຂໍ້ມູນຂ່າວສານ, ການບຳລຸງຍົກລະດັບຄວາມຮູ້ດ້ານວິຊາສະເພາະກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ, ປະຕິບັດຕາມສັນຍາສາກົນ ແລະ ສົນທິສັນຍາທີ່ສປປ ລາວ ເປັນພາຄີ.

ການຮ່ວມມືສາກົນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານແມ່ນໄດ້ຮັບການສົ່ງເສີມຈາກລັດຖະບານ ຊຶ່ງລັດສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຍີ, ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ແກ່ພະນັກງານປະຕິບັດຄຳຕັດສິນຂອງສານ ໂດຍສອດຄ່ອງກັບສັນຍາ ແລະ ສົນທິສັນຍາ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ.

## 2. ຄວາມໝາຍ ການຮ່ວມມືສາກົນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ການຮ່ວມມືສາກົນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານແມ່ນການນຳເອົາຜົນຂອງການໄກ່ເກ່ຍ, ຄຳຕັດສິນ, ຄຳພິພາກສາຂອງສານຕ່າງປະເທດທີ່ຖືກຮັບຮູ້ຈາກສານປະຊາຊົນສູງສຸດຂອງ ສປປ ລາວ ມາຈັດຕັ້ງປະຕິບັດຕາມກົດໝາຍ ໂດຍສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

ໃນການຮັບຮູ້ຄຳຕັດສິນຂອງຄະນະກຳມະການຕ່າງປະເທດນັ້ນ ກໍຕ້ອງຢູ່ບົນພື້ນຖານການຕົກລົງລະຫວ່າງປະເທດ , ການເຂົ້າເປັນພາຄີຂອງອະນຸສັນຍາ ແລະ ສົນທິສັນຍາຕ່າງໆ ສປປ ລາວ ໄດ້ເປັນພາຄີຕາມສົນທິສັນຍານິວຢອກ 1958 ວ່າດ້ວຍການຮັບຮູ້ ແລະ ບັງຄັບປະຕິບັດຄຳຕັດສິນຂອງຄະນະກຳມະການຕ່າງປະເທດ ຫຼື ສາກົນ ມາດຕາ 1 ຂໍ້

[1] ກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ສປປລາວ ປີ 2014

1 ໄດ້ກຳນົດໄວ້ວ່າ: "ສົນທິສັນຍາສະບັບນີ້ ໃຊ້ປະຕິບັດຕໍ່ການຮັບຮູ້ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ໄດ້ຕັດສິນຢູ່ດິນແດນຂອງລັດໃດໜຶ່ງ ທີ່ບໍ່ແມ່ນດິນແດນຂອງລັດ ທີ່ຖືກຮ້ອງຂໍໃຫ້ຮັບຮູ້ ແລະ ຈັດຕັ້ງປະຕິບັດ ແລະ ແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງບຸກຄົນ ຫຼື ນິຕິບຸກຄົນດ້ວຍກັນ. ສົນທິສັນຍາສະບັບນີ້ຍັງໃຊ້ປະຕິບັດ ຕໍ່ບັນດາຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ບໍ່ໄດ້ຖືວ່າແມ່ນຄຳຕັດສິນພາຍໃນຂອງລັດທີ່ຖືກຮ້ອງຂໍໃຫ້ມີການຮັບຮູ້ ແລະ ຈັດຕັ້ງປະຕິບັດນັ້ນ". ນີ້ກໍໝາຍຄວາມວ່າ ການຮ່ວມມືສາກົນ ລັດສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບການການດຳເນີນຄະດີແພ່ງ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ໂດຍສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ[2].

ການຮ່ວມມືສາກົນ ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການການດຳເນີນຄະດີອາຍາ ດ້ວຍການປະສານງານ, ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ບຸກຄະລາກອນຂອງການຈັດຕັ້ງ ທີ່ດຳເນີນຄະດີອາຍາ ໂດຍສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ[3].

ການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ່າງປະເທດ ແມ່ນການນຳເອົາຄຳຕັດສິນຂອງສານຕ່າງປະເທດ, ຄຳຕັດສິນຂອງຄະນະກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ໄດ້ເຂົ້າຮ່ວມເປັນພາຄີ ໂດຍໄດ້ຮັບການຢັ້ງຢືນ ແລະ ມີຄຳຕັດສິນຮັບຮູ້ ແລະ ໃຫ້ປະຕິບັດ ຈາກສານປະຊາຊົນຂອງ ສປປ ລາວ ທີ່ໃຊ້ໄດ້ຢ່າງເດັດຂາດ ສົ່ງມາອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

### 3. ຈຸດປະສົງ ການຮ່ວມມືສາກົນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

- ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຄະດີແພ່ງ ແລະ ຄະດີອາຍາ ແລະ ຜົນຂອງການໄກ່ເກ່ຍໃຫ້ມີປະສິດຕິພາບ, ວ່ອງໄວ, ສະເໝີພາບ, ເປັນທຳ ແລະ ສາມາດກວດກາໄດ້.
- ເພື່ອສຶກສາຄົ້ນຄ້ວາ ແລະ ພັດທະນາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຄະດີແພ່ງ ຄະດີອາຍາ ແລະ ຜົນຂອງການໄກ່ເກັ່ຍ ໃຫ້ເປັນມາດຕະຖານດຽວກັນໃນພາກພື້ນ ພ້ອມທັງພັດທະນາລະບົບທີ່ສະໜັບສະໜູນໃຫ້ທັນສະໄໝແລະ ມີປະສິດທິພາບ.
- ເພື່ອພັດທະນາກົດໝາຍ, ນິຕິກຳລຸ່ມກົດໝາຍ ທີ່ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ທັນສະໄໝ ແລະ ເປັນມາດຕະຖານສາກົນ.
- ເພື່ອສົ່ງເສີມ ແລະ ສະໜັບສະໜູນການຮ່ວມມືລະຫ່ວາງອົງການການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ພາຍໃນ ແລະ ຕ່າງປະເທດນຳເອົາວິທີການທີ່ເໝາະສົມ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານມາພັດທະນາໃຫ້ມີປະສິດທິພາບ;
- ເພື່ອພັດທະນາອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ ໃຫ້ມີປະສິດທິພາບ ໂດຍນຳເຕັກ

---

[2] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ(ສະບັບປັບປຸງ) ປີ 2012, ຕາມມາດຕາ 7

[3] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ) ປີ 2012

ໂນໂລຊີ ທີ່ທັນສະໄໝມານຳໃຊ້;

- ເພື່ອພັດທະນາບຸກຄະລາກອນໃຫ້ມີຄວາມຮູ້ຄວາມສາມາດ ແລະ ຊ່ຽວຊານ, ໃຫ້ມີຈິດສຳນຶກໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຢ່າງມີຄຸນນະທຳ ແລະ ມີຈັນຍາບັນ;

- ເພື່ອພັດທະນາລະບົບການຮ່ວມມືທາງດ້ານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກັບພາກສ່ວນທີ່ກ່ຽວຂ້ອງ;

- ເພື່ອເຜີຍແຜ່ຄວາມຮູ້ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ກົດໝາຍທີ່ກ່ຽວຂ້ອງ ແລະ ນິຕິກຳລຸ່ມກົດໝາຍ ໃຫ້ແກ່ປະຊາຊົນໄດ້ເຂົ້າໃຈຢ່າງທົ່ວເຖິງ.

## 4. ຫຼັກການຮ່ວມມືສາກົນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

- **ຫຼັກການລວມ:**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຕິບັດນະໂຍບາຍເປີດກ້ວາງການພົວພັນຮ່ວມມືເສດຖະ ກິດກັບຕ່າງປະເທດ ໂດຍນຳໃຊ້ຮູບການສຳພັນເສດຖະກິດ ແບບຫຼາຍທິດ, ຫຼາຍຝ່າຍ, ຫຼາຍຮູບແບບບົນຫຼັກການເຄົາລົບເອກະລາດ, ອະທິປະໄຕຂອງກັນ ແລະ ກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ[4].

ເຄົາລົບນັບຖືຊຶ່ງກັນແລະກັນ, ແມ່ນການເຄົາລົບນັບຖືຕໍ່ສິ່ງທີ່ສະແດງເຖິງ ຄວາມເປັນເອກະລາດ, ອະທິປະໄຕຂອງຊາດ ເຊັ່ນ: ພາສາຊາດ, ທຸງຊາດ, ເພງຊາດ, ສະກຸນເງິນ; ເຄົາລົບນັບຖືຜູ້ແທນ ຂອງຊາດ ແລະ ຂະນົບທຳນຽມຮີດຄອງປະເພນີ ຊຶ່ງກັນແລະ ກັນ;

ສະເໝີພາບບໍ່ຈຳແນກໃນການປະຕິບັດ, ນີ້ແມ່ນຫລັກການພື້ນຖານທີ່ສຸດ ຂອງກົດໝາຍສາກົນ, ຊຶ່ງໄດ້ລະບຸໄວ້ໃນກົດບັດສະຫະປະຊາຊາດ ແລະ ສົນທິສັນຍາສາກົນແຫ່ງ ກຸງວຽນ 1961;

ຕອບໂຕ້ເທົ່າທຽມກັນ, ນີ້ແມ່ນໂລຊິກ ຂອງສອງຫລັກການເທິງນັ້ນ, ມີຄວາມໝາຍວ່າ ໃນເມື່ອຝ່າຍໃດໜຶ່ງຫາກໄດ້ປະຕິບັດຕໍ່ອີກຝ່າຍໜຶ່ງຄືແນວໃດ ຝ່າຍຖືກກະທຳກໍມີສິດຕອບໂຕ້ເທົ່າທຽມກັນກັບການກະທຳດັ່ງກ່າວ.

- **ຫຼັກການສະເພາະ**

ຫຼັກການຮ່ວມມືສາກົນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານລະຫວ່າງ ອົງການຈັດຕັ້ງປະຕິ ບັດຄຳຕັດສິນຂອງສານ ສປປ ລາວ ກັບຕ່າງປະເທດຕ້ອງປະຕິບັດຕາມຫຼັກການເຄົາລົບເອກະລາດ, ອຳນາດອະທິປະໄຕ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ບໍ່ແຊກແຊງວຽກງານພາຍໃນຂອງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ສອດຄ່ອງກັບສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ໃນກໍລະນີ ທີ່ບໍ່ມີສັນຍາ ແລະ ສົນທິສັນຍາສາກົນ ກັບຕ່າງປະເທດນັ້ນ ສປປ ລາວ ອາດຈະຮັບເອົາມາພິຈາລະນາບົນຫຼັກການຮ່ວມມືເຊິ່ງກັນ ແລະ ກັນ ແຕ່ບໍ່ໃຫ້ຂັດກັບລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ.

ພາຍຫຼັງທີ່ໄດ້ຮັບຄຳຕັດສິນກ່ຽວກັບການຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ, ຄຳຕັດສິນຂອງຄະນະກຳມະ ການຕັດສິນຕ່າງປະເທດ ຫຼື ສາກົນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນ ສປປ ລາວ, ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງດຳເນີນການປະຕິບັດຕາມຄຳຕັດສິນຂອງສານ ແລະ ຂັ້ນຕອນຕາມທີ່ກຳນົດ ໄວ້ໃນກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ລະບຽບການຂອງ ສປປ ລາວໃຫ້ສຳເລັດໃນເວລາທີ່ກຳນົດໄວ້ໃນຄຳຕັດສິນ ແລະ ກົດໝາຍ;

---

[4] ລັດຖະທຳມະນູນແຫ່ງສປປລາວ (ສະບັບປັບປຸງປີ 2015), ມາດຕາ20

ການປະຕິບັດຄຳຕັດສິນຂອງສານຕ່າງປະເທດ ຕ້ອງປະຕິບັດຕາມຫຼັກການເຄົາລົບຄວາມເປັນເອກະລາດ, ອຳ ນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງຊາດ ບໍ່ແຊກແຊງວຽກງານພາຍໃນຂອງກັນ ແລະ ກັນ, ສະເໝີພາບ,ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ;

ກໍລະນີບໍ່ມີສົນທິສັນຍາ ແລະ ສັນຍາສາກົນ ກັບຕ່າງປະເທດກ່ຽວຂ້ອງນັ້ນ, ອີງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງ ສປປ ລາວ ຕ້ອງປະຕິບັດບົນຫຼັກການຮ່ວມມືສາກົນ, ຮ່ວມມືຊຶ່ງກັນ ແລະ ກັນ ຊຶ່ງບໍ່ຂັດກັບລັດຖະທຳ ມະນູນ ແລະ ກົດໝາຍຂອງ ສປປ ລາວ.

**References:**


1. ລັດຖະທຳມະນູນແຫ່ງສປປລາວ (ສະບັບປັບປຸງປີ 2015),
2. ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 4/ສພຊ, ລົງວັນທີ 25 ກໍລະກົດ 2008;
3. ກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ສປປລາວ ປີ 2014.